**ອົງການ ສະຫະປະຊາຊາດ** NATIONS UNIES

**ສະເໜີໂດຍ**
**ທ່ານ ນາງ ໂຊນຳ ຢັງຈັນ ຣານາ, ຜູ້ປະສານງານອົງການ ສປຊ ປະຈຳລາວ**
**ເນື່ອງໃນໂອກາດສະເຫຼີມສະຫຼອງວັນແຫ່ງອົງການ ສປຊ**
**ວັນສຸກ, ທີ 23 ຕຸລາ 2009**

---

**ຮຽນ ພະນະ ທ່ານ ນາງປານີ ຢາທໍ່ຕູ້, ຮອງປະທານ ສະພາແຫ່ງຊາດ**
**ຮຽນ ບັນດາລັດຖະມົນຕີ ແລະ ຮອງລັດຖະມົນຕີ**
**ທູດຕານຸທູດ**
**ບັນດາແຂກ ພະນັກງານ ແລະ ເພື່ອນປະຈຳ ອົງການ ສປຊ ທີ ນັບຖືແລະຮັກແພງ**

ຕາງໜ້າທີມງານອົງການ ສປຊ ປະຈຳ ສປປ ລາວ, ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງຍິ່ງທີ່ໄດ້ຕ້ອນຮັບທຸກທ່ານ ເຂົ້າມາຮ່ວມໃນງານສະເຫຼີມສະຫຼອງ ວັນອົງການ ສປຊປະຈຳປີ 2009. ຂ້າພະເຈົ້າຮູ້ສຶກດີໃຈຫຼາຍທີ່ເຫັນທຸກທ່ານໃນມື້ນີ້.

ມື້ນີ້ແມ່ນມື້ຄົບຮອບວັນເກີດ 64ປີ ຂອງອົງການ ສປຊ ແລະ ກໍ່ແມ່ນ ຸຖປີ ແຫ່ງສາຍພົວພັນລາວ ແລະ ອົງການ ສປຊ.

ໃນຖານະທີ່ເປັນເພື່ອນທີ່ໃກ້ສິດ ແລະ ສຳຄັນຂອງ ອົງການ ສປຊ ພ້ອມທັງເປັນຜູ້ນຳຂອງສະພາແຫ່ງຊາດ, ພວກຂ້າພະເຈົ້າຮູ້ສຶກດີໃຈເປັນຢ່າງຍິ່ງ ທີ່ໄດ້ຮັບກຽດຕ້ອນຮັບພະນະທ່ານ ນາງປານີ ຢາທໍ່ຕູ້ ແລະ ຂ້າພະເຈົ້າຂໍສະແດງຄວາມຂອບໃຈຕໍ່ຄຳເວົ້າອັນດີງາມຂອງພະນະທ່ານ.

ຂ້າພະເຈົ້າຈະບໍ່ເວົ້າເຖິງວ່າອົງການ ສປຊ ເຮັດຫຍັງ, ເພາະວ່າດັ່ງພະນະທ່ານໄດ້ພັນລະນາຢ່າງລະອຽດແລ້ວກ່ຽວກັບວິທີທີ່ພວກເຮົາໄດ້ເຮັດວຽກຮ່ວມກັບ ສປປ ລາວ, ແຕ່ຂ້າພະເຈົ້າຈະຍົກເອົາຫົວຂໍ້ຂອງວັນ ສປຊ ປີນີ້ ເຊິ່ງແມ່ນການປ່ຽນແປງຂອງດິນຟ້າອາກາດ ແລະ ແມ່ນສິ່ງທີ່ທ້າທາຍສຳລັບພວກເຮົາໝົດທຸກຄົນຢູ່ໃນໂລກ.

ຢູ່ປະເທດລາວພວກເຮົາກໍ່ຮູ້ໄດ້ຜົນກະທົບຕໍ່ກັບປະຊາຊົນ ຢູ່ໃນພາກໃຕ້ ເຊິ່ງໄດ້ຮັບຜົນກະທົບຢ່າງຮ້າຍແຮງຈາກນ້ຳຖ້ວມຈາກພະຍຸລະດູຮ້ອນ ເຊິ່ງມັນກໍ່ເປັນສິ່ງເຕືອນຄວາມຈຳວ່າ ສະພາບອາກາດອັນໂຫດຮ້າຍນີ້ ອາດຈະເກີດຂຶ້ນຫຼາຍກ່ວາເກົ່າ ຍ້ອນການປ່ຽນແປງຂອງອາກາດ. ເຊິ່ງມັນມີຜົນກະທົບບໍ່ພຽງແຕ່ໄລຍະສັ້ນເທົ່ານັ້ນ. ປະຊາຊົນຢູ່ອັດຕະປື, ເຊກອງ, ສາລະວັນ, ສະຫວັນນະເຂດ ແລະ ຈຳປາສັກ ສູນເສຍຜົນຜະລິດ, ເຮືອນຊານບ້ານຊ່ອງ ຕ້ອງຖືກສ້າງໃໝ່, ໃນຄະນະທີ່ການສຶກສາຂອງເດັກນ້ອຍ ກໍ່ຖືກຢຸດຕິຊົ່ວຄາວ ແລະ ກໍ່ມີຜົນກະທົບຕໍ່ກັບສຸກຂະພາບຂອງເຂົາເຈົ້າ.ໃນຄະນະທີ່ອາກາດປ່ຽນແປງ, ຜູ້ທີ່ຖືກຜົນກະທົບຮ້າຍແຮງທີ່ສຸດກໍ່ມີຄວາມສ່ຽງສູງ. ຜົນກະທົບການປ່ຽນແປງຂອງດິນຟ້າອາກາດໃນທົ່ວໂລກ ອາດຈະຍືນຍາວ ແລະ ໃຫຍ່ຫຼວງ. ຂອບຂອງອົງການ ສປຊ ໄດ້ຄາດຄະເນວ່າ ຜົນເສຍຫາຍທົ່ວໂລກ ຍ້ອນການປ່ຽນແປງຂອງດິນຟ້າອາກາດ ຕົກເປັນປະມານ 160 ຫາ 300 ຕື້ໂດລາ ສະຫະລັດ ມາຮອດປະຈຸບັນ. ມູນຄ່າດັ່ງກ່າວອາດຈະເພີ່ມຂຶ້ນອີກເປັນ 5 ເທົ່າ ໃນປີ 2030.

ເພື່ອຈຳກັດອັດຕາໂລກຮ້ອນໃນປະຈຸບັນ, ປະເທດທີ່ພັດທະນາແລ້ວຈະຕ້ອງຫຼຸດຜ່ອນ ການປ່ອຍອາຍ ແກສ໌ ເຮືອນແກ້ວ ຢ່າງນ້ອຍ 40% ໃນປີ 2030.

ເຖິງແມ່ນວ່າລາວ ຈະມີສ່ວນໃນການປ່ອຍອາຍກາກໂບນິກ, ແຕ່ພວກເຮົາກໍ່ເປັນສ່ວນໜຶ່ງຂອງສະພາບແວດລ້ອມໂລກ ແລະ ພວກເຮົາຕ້ອງຮ່ວມມືກັນ ເພື່ອແກ້ໄຂບັນຫາດັ່ງກ່າວ. ໂດຍຮັບປະກັນວ່າການຂະຫຍາຍຕົວຂອງປະເທດຈະບັນລະໄດ້ໂດຍການສ້າງອາຍ ຄາບອນໜ້ອຍທີ່ສຸດ. ຖ້າບໍ່ດັ່ງນັ້ນ, ການປ່ຽນແປງຂອງເງື່ອນໄຂສະພາບອາກາດ ຈະມີຜົນກະທົບຕໍ່ການຂະຫຍາຍຕົວຂອງປະເທດ ແລະ ການ ບັນລຸເປົ້າຍສະຫະສະວັດ ດ້ານການພັດທະນາ ແລະ ຫຼຸດຜ່ອນຈາກສະພາບການດ້ອຍພັດທະນາໃນປີ 2020.

ໃນ ສປປ ລາວ, ອົງການ ສປຊ ຈະສະໜັບສະໜູນລັດຖະບານກະກຽມ ຕໍ່ສູ້ກັບຜົນກະທົບຂອງ ການປ່ຽນແປງດິນຟ້າອາກາດໃນຂັ້ນຍຸດທະສາດ ແລະ ຈະຊ່ວຍເຊື່ອສານການປ່ຽນແປງຂອງດິນຟ້າອາກາດ ເຂົ້າໃນຂະບວນການຫຼຸດຜ່ອນຄວາມທຸກຍາກ ແລະເດີນຕາມເສັ້ນທາງການເຕີບໂຕແບບຍືນຍົງໂດຍມີການປ່ອຍສານຄາບອນທີ່ຕ່ຳ.

ຂ້າພະເຈົ້າຈະສະໜັບສະໜູນຄະນະຜູ້ແທລາວ ທີ່ຈະເດີນທາງໄປຮ່ວມການເຈລະຈາກ່ຽວກັບບັນຫາການປ່ຽນແປງຂອງດິນຟ້າອາກາດຂອງໂລກ ທີ່ ໂຄເປັນຮາແກນ ໃນທ້າຍປີນີ້ ເພື່ອໃຫ້ລາວໄດ້ຮ່ວມ

ໃນການເຈລະຈາ ເພື່ອໃຫ້ມີໝາກຜົນທີ່ຄົບຖ້ວນ ແລະ ທ່ຽງທຳ ເພື່ອຄົນລຸ່ນເຮົາ ແລະ ຕໍ່ໆໄປ. ພວກເຮົາຈະເຮັດວຽກໄກ້ຊິດກັບລັດຖະບານ ໃນການພັດທະນາ ແລະ ຮັບມືກັບການປ່ຽນແປງ.

ພະນະທ່ານ ແລະ ເພື່ອນສະຫາຍ,

ຫົວຂໍ້ຂອງວັນ ສປຊ ກ່ຽວກັບການປ່ຽນແປງຂອງດິນຟ້າອາກາດນີ້ ແມ່ນເປັນຫົວຂໍ້ທີ່ເຮັດໃຫ້ຊາວໜຸ່ມລາວ ຈາກມະຫາວິທະຍາໄລ ເຊິ່ງໄດ້ຈັດການທົດລອງກ່ຽວກັບສະພາຄວາມໝັ້ນຄົງຂອງອົງການ ສປຊ ໂດຍຮ່ວມມືກັບ ກະຊວງການຕ່າງປະເທດ. ທ່ານຈະໄດ້ຍິນກ່ຽວກັບເລື່ອງນີ້ຕື່ມອີກ ແຕ່ຂ້າພະເຈົ້າຂໍແຈ້ງໃຫ້ທ່ານຊາບວ່າ: ຂ້າພະເຈົ້າຂໍຊົມເຊີຍກັບຄວາມຮູ້ຂອງນັກຮຽນກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ.

ຜ່ານການຄົ້ນຄ້ວາ, ສຶກສາຮ່ຳຮຽນ ເຂົາເຈົ້າຈະມີຄວາມສາມາດໃນການເປັນທູດອັນໜຸ່ມນ້ອຍເພື່ອຊ່ວຍໃຫ້ຊາວໜຸ່ມຜູ້ອື່ນໆ ເຂົ້າໃຈເຖິງບັນຫາການປ່ຽນແປງຂອງດິນຟ້າອາກາດຢ່າງແທ້ຈິງ. ພວກເຮົາຈະໄດ້ມອບລາງວັນຊະນະເລີດໃນການເຮັດບົດຝຶກຈັດຈຳລອງໃນມື້ນີ້. ແລະຂ້າພະເຈົ້າກໍ່ຮູ້ວ່າເຂົາເຈົ້າກຳລັງລໍຄອຍດ້ວຍໃຈຈົດໃຈຈໍ່.

ພະນະທ່ານ, ແຂກຜູ້ມີກຽດ, ທ່ານຍິງທ່ານຊາຍ,

ຂ້າພະເຈົ້າຂໍຖືໂອກາດນີ້ ສະແດງຄວາມຮັບຮູ້ກ່ຽວກັບອົງການ ສປຊ ແມ່ນຂອງໝົດທຸກຄົນຢູ່ທີ່ນີ້, ແມ່ນເປັນຂອງທ່ານ ແລະ ຂອງສະມາຊິກ! ເປັນອົງການຈັດຕັ້ງຂອງທ່ານ. ຂ້າພະເຈົ້າຂໍຂອບໃຈລັດຖະບານ ສປປລາວ ສຳລັບຄວາມໄວ້ເນື້ອເຊື່ອໃຈ ຕໍ່ສາຍພົວພັນດັ່ງກ່າວ ແລະ ຂອບໃຈຕໍ່ຄູ່ຮ່ວມພັດທະນາ ສຳລັບການຊ່ວຍເຫຼືອ ແລະ ການຮ່ວມມືຕະຫຼອດມາ. ແລະ ທ້າຍສຸດນີ້, ຂ້າພະເຈົ້າສະແດງຄວາມຂອບໃຈຕໍ່ພະນັກງານສຳລັບການເຮັດວຽກ ແລະ ຄວາມຕັດສິນໃຈ, ເຊື່ອໝັ້ນໃນອົງການ ສປຊ.